ທະນາຄານແຫ່ງ ສປປ ລາວ
BANK OF THE LAO PDR

ຂ່າວ NEWS

ໜ່ວຍງານຂ່າວສານ ພະແນກສັງລວມ ຫ້ອງການ ທຫລ
ໂທ /ແຟັກ ( 856-21) 260283

# ໂຮງຮຽນອະນຸບານ ທຫລ ສະເຫຼີມສະຫຼອງ ວັນເດັກສາກົນ 01 ມິຖຸນາ




ໂຮງຮຽນອະນຸບານ ທະນາຄານແຫ່ງ ສປປ ລາວ (ທຫລ) ໄດ້ຈັດຕັ້ງພິທີສະເຫຼີມສະຫຼອງວັນເດັກນ້ອຍສາກົນ 01 ມິຖຸນາ ຂຶ້ນໃນຕອນເຊົ້າຂອງວັນທີ 31 ພຶດສະພາ 2019 ທີ່ໂຮງຮຽນອະນຸບານ ທຫລ, ໂດຍການໃຫ້ກຽດເຂົ້າຮ່ວມໃນພິທີຂອງທ່ານ ພຸດທະໄຊ ສີວິໄລ ຄະນະປະຈຳພັກ, ຫົວໜ້າກົມຄຸ້ມຄອງທະນາຄານທຸລະກິດ ທຫລ, ພ້ອມນີ້ກໍ່ມີຄະນະຫ້ອງການ ທຫລ, ພາກສ່ວນທີ່ກ່ຽວຂ້ອງພ້ອມດ້ວຍພໍ່ແມ່ຜູ້ປົກຄອງ ແລະ ຫຼານນ້ອຍນັກຮຽນໂຮງຮຽນອະນຸບານ ທຫລ ເຂົ້າຮ່ວມຫຼາຍກວ່າ 500 ຄົນ.

ໃນພິທີ, ຜູ້ເຂົ້າຮ່ວມ ໄດ້ຮັບຊົມການສະແດງສິລະປະ, ການຮ້ອງເພງ ແລະ ການເລົ່ານິທານເປັນພາສາອັງກິດຂອງຫຼານນ້ອຍນັກຮຽນໂຮງຮຽນອະນຸບານ ທຫລ ດ້ວຍຄວາມມ່ວນຊື່ນ ແລະ ໃນໂອກາດນີ້, ທ່ານ ພຸດທະໄຊ ສີວິໄລ ຄະນະປະຈຳພັກ, ຫົວໜ້າກົມຄຸ້ມຄອງທະນາຄານທຸລະກິດ ທຫລ ຕາງໜ້າໃຫ້ຄະນະຜູ້ວ່າການ ທຫລ ໄດ້ກ່າວວ່າ: "...ໂດຍເຫັນໄດ້ຄວາມສຳຄັນ ແລະ ອະນາຄົດຂອງເດັກທີ່ຈະເປັນຜູ້ສືບທອດອະນາຄົດຂອງປະເທດຊາດ, ຄະນະນຳຂອງ ທຫລ ຍາມໃດກໍ່ໄດ້ໃຫ້ຄວາມສຳຄັນ ແລະ ເອົາໃຈໃສ່ຊີ້ນຳວຽກງານໂຮງຮຽນອະນຸບານ ທຫລ ໂດຍໄດ້ສ້າງເງື່ອນໄຂຄວາມສະດວກຫຼາຍດ້ານເປັນຕົ້ນ: ດ້ານງົບປະມານ, ການປະກອບອຸປະກອນການຮຽນ-ການສອນ, ການລ້ຽງດູເບິ່ງແຍງ ແລະ ສຶກສາອົບຮົມເດັກ ເພື່ອໃຫ້ເດັກເຕີບໃຫຍ່ເຂັ້ມແຂງ ຕັ້ງໃຈຮ່ຳຮຽນ ເຕັມໄປດ້ວຍສະຕິປັນຍາ ແລະ ມີອານາຄົດທີ່ສົດໃສ...".









ຈາກໝາກຜົນຂອງການຊີ້ນຳຢ່າງໃກ້ຊິດຕິດແທດຈາກຄະນະນຳຂອງ ທຫລ, ໂຮງຮຽນອະນຸບານ ທຫລ ໄດ້ມີຜົນງານໃນຫຼາຍດ້ານທີ່ພົ້ນເດັ່ນ ໂດຍໄດ້ກາຍເປັນໂຮງຮຽນຕົວແບບ ແລະ ນອກຈາກການສິດສອນຕາມຫຼັກສູດຂອງກະຊວງສຶກສາວາງອອກໃນແຕ່ລະໄລຍະແລ້ວ ທາງໂຮງຮຽນຍັງໄດ້ເພີ່ມວິຊາຮຽນນອກຫຼັກສູດກໍ່ຄື ການສອນພາສາອັງກິດ ແລະ ພາສາຈີນ, ການເອົາໃຈໃສ່ການຕິດຕາມພັດທະນາການ, ສຸຂະພາບ ແລະ ການຈະເລີນເຕີບໂຕຂອງເດັກ ແລະ ອື່ນໆ.

**# ຂ່າວ-ພາບ: ວັນປະເສີດ ສິມບູນຂັນ.**

**ຊາດພັດທະນາ ພາເສດຖະກິດກ້າວໄກ ພ້ອມກັນນຳໃຊ້ເງິນກີບ**